# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນພາຍໃນ ສປປ ລາວ, ພາກພື້ນ ແລະ ສາກົນ........................... ໜ້າ 01 – 08

II. ການເຄື່ອນໄຫວວຽກງານ ຂອງການນຳພັກ ປປ ລາວ……………………………….ໜ້າ 09-10

III. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ................................................ ໜ້າ 10-13

IV. ການເຄື່ອນໄຫວວຽກງານຂອງອົງການຈັດຕັ້ງມະຫາຊົນ ຄຕພ................................. ໜ້າ 13-14


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ກໍລະກົດ 2022**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຢູ່ ສປປ ລາວ

### 1) ສະຫາຍເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປ ລາວ ຕ້ອນຮັບ ຄະນະຜູ້ແທນຂັ້ນສູງຂອງ ສສ. ຫວຽດນາມ

ວັນທີ 17 ກໍລະກົດ 2022, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ, ປະທານປະເທດ ແຫ່ງ ສປປ ລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ສະຫາຍ ຫວໍ ວັນ ເຖື້ອງ, ກໍາມະການກົມການເມືອງສູນກາງພັກ, ຜູ້ປະຈໍາການຄະນະເລຂາທິການສູນກາງພັກກອມມູນິດຫວຽດນາມ, ຫົວໜ້າຄະນະຊີ້ນໍາລະດັບຊາດ ເພື່ອສະເຫຼີມສະຫຼອງປີສາມັກຄີມິດຕະພາບ ຫວຽດນາມ-ລາວ ປີ 2022 ພ້ອມຄະນະ ທີ່ເດີນທາງມາເຄື່ອນໄຫວຢ້ຽມຢາມ ແລະ ເຂົ້າຮ່ວມພິທີສະເຫຼີມສະຫຼອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ, ຫວຽດນາມ-ລາວ ຄື: ວັນສ້າງຕັ້ງສາຍພົວພັນການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບລາວ-ຫວຽດນາມ ຄົບຮອບ 45 ປີ ທີ່ໄດ້ຈັດຂຶ້ນໃນລະຫວ່າງວັນທີ 17-19 ກໍລະກົດ 2022 ທີ່ນະຄອນຫຼວງວຽງຈັນ.

ໂອກາດດັ່ງກ່າວ ສະຫາຍເລຂາທິການໃຫຍ່, ປະທານປະເທດ ທອງລຸນ ສີສຸລິດ ໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ຕໍ່ການຢ້ຽມຢາມ ສປປ ລາວ ຂອງ ສະຫາຍ ຫວໍ ວັນ ເທືອງ ຄັ້ງນີ້ ແລະ ສະແດງຄວາມຊົມເຊີຍໄປຍັງການນໍາພັກ-ລັດ ແລະ ປະຊາຊົນ ຫວຽດນາມ ທີ່ສາມາດຍາດໄດ້ຜົນສໍາເລັດອັນສໍາຄັນ ໃນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XIII ຂອງພັກ, ເຊິ່ງສາມາດຮັກສາໄດ້ສະຖຽນລະພາບທາງການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ເສດຖະກິດມີການຂະຫຍາຍຕົວຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການປັບປຸງດີຂຶ້ນເລື້ອຍໆ, ຖານະບົດບາດຂອງພັກ ແລະ ລັດຖະບານຫວຽດນາມ ກໍ່ນັບມື້ໄດ້ຮັບການຍົກສູງຂຶ້ນໃນເວທີພາກພື້ນ ແລະ ສາກົນ; ທັງໄດ້ຢັ້ງຢືນຄືນສາຍພົວພັນສອງປະເທດ ແມ່ນເກີດຂຶ້ນມາດ້ວຍມູນເຊື້ອ ແຫ່ງຄວາມສາມັກຄີ ແລະ ຮ່ວມສໍາພັນສູ້ຮົບ ທີ່ເປັນຕາຍນໍາກັນ ເພື່ອຕໍ່ສູ້ກູ້ຊາດ, ຍາດເອົາເອກະລາດແຫ່ງຊາດ, ອິດສະຫຼະພາບມາໃຫ້ປະຊາຊົນທັງສອງຊາດ; ຜ່ານບັນດາກິດຈະກໍາຕ່າງໆ ໃນປີສາມັກຄີມິດຕະພາບ ລາວ-ຫວຽດນາມ ປີ 2022 ນີ້ ສ່ອງແສງໃຫ້ເຫັນການເສີມຂະຫຍາຍມູນເຊື້ອອັນດີງາມຂອງສອງຊາດ ລາວ-ຫວຽດນາມ, ຫວຽດນາມ-ລາວ ເພື່ອໃຫ້ຄົນຮຸ່ນປັດຈຸບັນ ແລະ ຮຸ່ນຄົນຕໍ່ໄປ ຂອງທັງສອງປະເທດ ໄດ້ພ້ອມກັນສືບທອດ ແລະ ເພີ່ມພູນຄູນສ້າງໃຫ້ໜັກແໜ້ນຍິ່ງໆຂຶ້ນໄປ.

### 2) ການສະເຫຼີມສະຫຼອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ, ຫວຽດນາມ-ລາວ ປີ 2022

ວັນທີ 18 ກໍລະກົດ 2022 ໄດ້ມີພິທີໂຮມຊຸມນຸມເພື່ອສະເຫຼີມສະຫຼອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ ປີ 2022, ທີ່ ຫໍປະຊຸມແຫ່ງຊາດ, ໂດຍການໃຫ້ກຽດເຂົ້າຮ່ວມຂອງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປ ລາວ, ສະຫາຍ ຫວໍ ວັນ ເຖື້ອງ, ກໍາມະການກົມການເມືອງສູນກາງພັກ, ຜູ້ປະຈໍາການຄະນະເລຂາທິການສູນກາງພັກກອມມູນິດຫວຽດນາມ, ຫົວໜ້າຄະນະຊີ້ນໍາລະດັບຊາດສະເຫຼີມສະຫຼອງປີສາມັກຄີມິດຕະພາບ ຫວຽດນາມ-ລາວ ປີ 2022 ພ້ອມດ້ວຍຄະນະ, ສະຫາຍ ພັນຄໍາ ວິພາວັນ, ກໍາມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ; ສະຫາຍ ໄຊສົມພອນ ພົມວິຫານ, ກໍາມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແລະ ບັນດາສະຫາຍການນໍາພັກ-ລັດຖະບານ, ພະນັກງານ, ທະຫານ, ຕໍາຫຼວດ, ຊາວໜຸ່ມ, ນ້ອງນັກຮຽນ-ນັກສຶກສາ ແລະ ພາກສ່ວນກ່ຽວຂ້ອງຂອງສອງຝ່າຍ ລາວ-ຫວຽດນາມ, ຫຼາຍກວ່າ 1.000 ສະຫາຍ ເຂົ້າຮ່ວມ.

ໃນໂອກາດດັ່ງກ່າວ, ສະຫາຍ ເລຂາທິການໃຫຍ່, ປະທານປະເທດ ສປປ ລາວ ທອງລຸນ ສີສຸລິດ ໄດ້ຕາງໜ້າໃຫ້ການນໍາພັກ-ລັດ ແລະ ປະຊາຊົນລາວບັນດາເຜົ່າ ໃນທົ່ວປະເທດ ຂຶ້ນກ່າວປິດສູນທອນພິດ, ເຊິ່ງມີເນື້ອໃນບາງຕອນສໍາຄັນດັ່ງນີ້: “ມື້ນີ້ ສອງພັກ-ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໄດ້ພ້ອມກັນຈັດພິທີໂຮມຊຸມນຸມໃຫຍ່ ເພື່ອສະເຫຼີມສະຫຼອງ **“ປີສາມັກຄີມິດຕະພາບ ລາວ-ຫວຽດນາມ, ຫວຽດນາມ-ລາວ”** ຂຶ້ນຢ່າງເປັນທາງການ ພ້ອມກັນຢູ່ປະເທດຂອງຕົນ ເພື່ອລະນຶກເຖິງວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ຄົບຮອບ 45 ປີ ແລະ ວັນສ້າງຕັ້ງສາຍພົວພັນການທູດ ຄົບຮອບ 60 ປີ, ກໍ່ຄືທວນຄືນເຖິງມູນເຊື້ອແຫ່ງການກໍາເນີດສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງຊາດ ລາວ-ຫວຽດນາມ, ຫວຽດນາມ-ລາວ; ສະແດງຄວາມຂອບໃຈອັນຈິງໃຈ ແລະ ຄວາມຮູ້ບຸນຄຸນອັນລົ້ນເຫຼືອຕໍ່ພັກ-ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ທີ່ໄດ້ໃຫ້ການຊ່ວຍເຫຼືອອັນລໍ້າຄ່າ, ທັນການ ແລະ ມີຜົນສັກສິດ ໃນພາລະກິດຕໍ່ສູ້ກູ້ຊາດໃນເມື່ອກ່ອນ ກໍ່ຄືພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຂອງພວກເຮົາ ໃນປັດຈຸບັນ; ອວຍພອນໃຫ້ ມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລາວ-ຫວຽດນາມ, ຫວຽດນາມ-ລາວ ຈົ່ງໝັ້ນຄົງຂະນົງແກ່ນ ຕະຫຼອດກາລະນານ ແລະ ຂໍຖືໂອກາດນີ້ ອວຍພອນໄຊອັນປະເສີດ ໃຫ້ບັນດາສະຫາຍຫວຽດນາມ ຈົ່ງປະສົບຜົນສໍາເລັດໃໝ່, ໃຫຍ່ຫຼວງກວ່າເກົ່າ ໃນການປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XIII ຂອງພັກກອມມູນິດຫວຽດນາມ ຢ່າງມີໄຊ!

ໃນພິທີສະເຫຼີມສະຫຼອງດັ່ງກ່າວ, ສະຫາຍ ຫວໍ ວັນ ເທື່ອງ, ກໍາມະການກົມການເມືອງສູນກາງພັກ, ຜູ້ປະຈໍາການຄະນະເລຂາທິການສູນກາງພັກກອມມູນິດຫວຽດນາມ, ຫົວໜ້າຄະນະຊີ້ນໍາລະດັບຊາດສະເຫຼີມສະຫຼອງປີສາມັກຄີມິດຕະພາບ ຫວຽດນາມ-ລາວ ປີ 2022 ໄດ້ຕາງໜ້າໃຫ້ ພັກ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ປະດັບຫຼຽນໄຊ ໃຫ້ແກ່ການນໍາຂັ້ນສູງ ພັກ-ລັດ 11 ສະຫາຍ, ໃນນັ້ນ, ຫຼຽນໄຊດາວຄໍາ 2 ສະຫາຍ, ຫຼຽນໄຊໂຮ່ຈີມິນ 4 ສະຫາຍ ແລະ ຫຼຽນໄຊເອກະລາດຊັ້ນ 1 ມີ 5 ສະຫາຍ.

**3) ກອງປະຊຸມຄະນະກໍາມາທິການຮ່ວມມື ວ່າດ້ວຍ ການຮ່ວມມືສອງຝ່າຍ ລາວ-ກໍາປູເຈຍ, ກໍາປູເຈຍ-ລາວ ຄັ້ງທີ 14**

ທ່ານ ສະເຫຼີມໄຊ ກົມມະສິດ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ເປັນປະທານຮ່ວມກັບ ທ່ານ ປຣາກ ໂຊຄົນ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ແລະ ຮ່ວມມືສາກົນ ແຫ່ງ ຣາຊະອານາຈັກ ກໍາປູເຈຍ ໃນກອງປະຊຸມຄະນະກໍາມາທິການ ວ່າດ້ວຍການຮ່ວມມື ລາວ-ກໍາປູເຈຍ (JC) ຄັ້ງທີ 14 ຈັດຂຶ້ນທີ່ ກໍາປູເຈຍ ລະຫວ່າງວັນທີ 06-08 ກໍລະກົດ 2022, ມີຄະນະຜູ້ແທນກ່ຽວຂ້ອງສອງຝ່າຍ ເຂົ້າຮ່ວມ. ກອງປະຊຸມ ໄດ້ທົບທວນ ແລະ ຕີລາຄາຄືນ ການຈັດຕັ້ງຜັນຂະຫຍາຍເນື້ອໃນ ບົດບັນທຶກກອງປະຊຸມ JC ຄັ້ງທີ 13 ທີ່ຈັດຂຶ້ນຢູ່ ນະຄອນຫຼວງວຽງຈັນ ໃນເດືອນກຸມພາ 2019, ກໍຄືການຕີລາຄາຄືນ ການຮ່ວມມືສອງຝ່າຍໃນໄລຍະຜ່ານມາ ເປັນຕົ້ນແມ່ນ ການຮ່ວມມືດ້ານການເມືອງ-ຄວາມໝັ້ນຄົງ, ການຮ່ວມມືດ້ານເສດຖະກິດ ແລະ ວິຊາການ, ການຮ່ວມມືດ້ານວັດທະນາທໍາ-ສັງຄົມ, ການຮ່ວມມືພາກພື້ນ-ອະນຸພາກພື້ນ ແລະ ອື່ນໆ; ສອງຝ່າຍ ໄດ້ສະແດງຄວາມເພິ່ງພໍໃຈ ທີ່ເຫັນວ່າ ສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ເປັນມູນເຊື້ອ ຖານບ້ານໃກ້ ເຮືອນຄຽງ ບ້ານພີ່ເມືອງນ້ອງ ບ້ານແກ້ວເມືອງດອງ ທີ່ມີມາແຕ່ດົນນານ ລະຫວ່າງປະຊາຊົນສອງຊາດ ລາວ-ກໍາປູເຈຍ ນັບມື້ນັບໄດ້ຮັບການເສີມຂະຫຍາຍຢ່າງແໜ້ນແຟ້ນຍິ່ງໆຂຶ້ນ ແລະ ເປັນຮູບປະທໍາຫຼາຍຂຶ້ນ; ຮ່ວມກັນຮ່າງແຜນປະຕິບັດງານຄູ່ຮ່ວມມືຍຸດທະສາດຮອບດ້ານ ແລະ ໝັ້ນຄົງຍາວນານ ສອງຝ່າຍ ໄລຍະປີ 2023-2027, ຊຶ່ງຈະລົງນາມຮ່ວມກັນໃນໂອກາດການຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ ຂອງ ສົມເດັດ ອັກຄະມະຫາ ເສນາບໍດີ ເຕໂຈ ຮຸນແຊນ, ນາຍົກລັດຖະມົນຕີ ແຫ່ງລາຊະອານາຈັກກໍາປູເຈຍ ໃນປີ 2023; ສອງຝ່າຍ ໄດ້ເອກະພາບກັນ ສືບຕໍ່ປຶກສາຫາລືໃຫ້ສໍາເລັດຮ່າງສົນທິສັນຍາ ວ່າດ້ວຍການກໍານົດເສັ້ນຊາຍແດນ ທີ່ໄດ້ສໍາເລັດການສໍາຫຼວດຮ່ວມກັນແລ້ວ 86% ແລະ ສືບຕໍ່

ແກ້ໄຂບໍລິເວນຊາຍແດນທີ່ຍັງຄ້າງຄ້າງ ເພື່ອໃຫ້ສໍາເລັດການກໍານົດເສັ້ນຊາຍແດນສອງປະເທດຢ່າງສົມບູນ ແລະ ຮ່ວມກັນ ເຮັດໃຫ້ຊາຍແດນ ລາວ-ກໍາປູເຈຍ ເປັນຊາຍແດນແຫ່ງສັນຕິພາບ, ມິດຕະພາບ ແລະ ໄດ້ຮັບການພັດທະນາ; ຍັງໄດ້ຮ່ວມກັນລົງນາມຮັບຮອງເອົາບົດບັນທຶກກອງປະຊຸມ JC ຄັ້ງທີ 14 ດ້ວຍຜົນສໍາເລັດອັນຈົບງາມ.

**2. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ**

**1) ພັກກອມມູນິດຫວຽດນາມ**

ສະຫາຍ ຫງວຽນ ຟູຈ້ອງ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ປະທານປະເທດ ແຫ່ງ ສສ ຫວຽດນາມ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ Sergei Lavrov, ລັດຖະມົນຕີກະຊວງການຕ່າງປະເທດລັດເຊຍ ໃນໂອກາດຢ້ຽມຢາມ ສສ ຫວຽດນາມ ລະຫວ່າງວັນທີ 5-6/07/2022. ທ່ານ ຫງວຽນຟູຈ້ອງ ກ່າວວ່າ ຫວຽດນາມ ຍາມໃດກໍເຄົາລົບ ແລະ ຈົດຈໍາຕໍ່ການຊ່ວຍເຫຼືອຂອງເພື່ອນມິດສາກົນໃນການຕໍ່ສູ້ ແລະ ພັດທະນາປະເທດຊາດ ໃນໄລຍະຜ່ານມາ, ຖືສໍາຄັນການພົວພັນຮ່ວມມືຍຸດທະສາດຮອບດ້ານລະຫວ່າງສອງປະເທດຫວຽດນາມ-ລັດເຊຍ. ທ່ານ Sergey Lavrov ຍັງໄດ້ພົບປະກັບຄູ່ຮ່ວມຕໍາແໜ່ງຫວຽດນາມ ທ່ານ Bùi Thanh Sơn ເພື່ອທົບທວນຄືນການຮ່ວມມືຜ່ານມາ ແລະ ແລກປ່ຽນກ່ຽວກັບບັນຫາສາກົນທີ່ສົນໃຈຮ່ວມກັນ. ຫວຽດນາມ ແລະ ລັດເຊຍ ສ້າງຕັ້ງສາຍພົວພັນການທູດນໍາກັນ ແຕ່ປີ 1950, ເປັນຄູ່ຮ່ວມມືຍຸດທະສາດນໍາກັນ ໃນປີ 2001 ແລະ ຖືກຍົກລະດັບເປັນຄູ່ຮ່ວມມືຍຸດທະສາດຮອບດ້ານ ໃນປີ 2012. ການຮ່ວມມືສອງຝ່າຍ ໄດ້ຮັບການເສີມຂະຫຍາຍເປັນກ້າວໆມາ, ມີການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນສອງປະເທດ ແລະ ບັນດາກອງປະຊຸມຮ່ວມກັນໃນທຸກລະດັບ. ມູນຄ່າການຄ້າສອງຝ່າຍ ບັນລຸ 4.85 ຕື້ໂດລາສະຫະລັດ ໃນປີ 2020, ເພີ່ມຂຶ້ນ 9% ຖ້າທຽບໃສ່ປີ 2019 ແລະ ເພີ່ມເປັນ 7.1 ຕື້ໂດລາສະຫະລັດ ໃນປີ 2021, ເພີ່ມຂຶ້ນ 25% ຖ້າທຽບໃສ່ປີ 2020. ນອກຈາກນັ້ນ, ລັດເຊຍ ໄດ້ລົງທຶນໃນຫວຽດນາມ 150 ໂຄງການ ດ້ວຍທຶນຈົດທະບຽນທັງໝົດ 950 ລ້ານໂດລາສະຫະລັດ.

**2). ພັກກອມມູນິດຈີນ**

ພັກກອມມູນິດຈີນ ສືບຕໍ່ເປັນແບບຢ່າງ, ນໍາພາ-ຊີ້ນໍາ ການພັດທະນາປະເທດຊາດຢ່າງບໍ່ຢຸດຢັ້ງ, ວັນທີ 15/7/2022, ສະຫາຍ ສີຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດຈີນ ໄດ້ລົງຢ້ຽມຢາມແຂວງຊິນຈ່ຽງ ແລະ ໄດ້ມີຄໍາເຫັນ ເນັ້ນໜັກວ່າ: ຕ້ອງປະຕິບັດມະຕິຂອງ ຄະນະບໍລິຫານງານສູນກາງພັກ ຢ່າງເຂັ້ມງວດ, ປະຕິບັດຍຸດທະສາດຂອງພັກ ໃນການປົກຄອງແຂວງຊິນຈ່ຽງ " ຕ້ອງຍຶດໝັ້ນເອົາຄວາມໝັ້ນຄົງຂອງສັງຄົມໃນໄລຍະຍາວ ເປັນເປົ້າໝາຍລວມ " ຢ່າງຄົບຖ້ວນ ແລະ ໜັກແໜ້ນ, ສູ້ຊົນສ້າງເຂດຊິນຈຽງ ໃຫ້ມີຄວາມເປັນເອກະພາບກັນ ແລະ ມີອາລິຍະທໍາ.

ໃນວຽກງານຕ່າງປະເທດ ກໍຄືການມີສ່ວນຮ່ວມໃນການສ້າງສັນຕິພາບໂລກ, ສປ ຈີນ ກໍໄດ້ໃຫ້ຄວາມສໍາຄັນຕະຫຼອດມາ, ວັນທີ 2-5 ກໍລະກົດ 2022, ມະຫາວິທະຍາໄລຊິງຮວາ, ສປ ຈີນ ໄດ້ເປັນເຈົ້າພາບຈັດກອງປະຊຸມສັນຕິພາບໂລກ ຄັ້ງທີ 10 ຂຶ້ນ, ມີບັນດາເອກອັກຄະລັດຖະທູດຕ່າງປະເທດ ປະຈໍາ ສປ ຈີນ ແລະ ນັກວິຊາການຈໍານວນໜຶ່ງເຂົ້າຮ່ວມ. ເຊິ່ງ ທ່ານ Nicholas Burns, ເອັກອັກຄະລັດສະທູດອາເມລິກາ ໄດ້ກ່າວວ່າ ການພົວພັນ ອາເມລິກາ-ຈີນ ເປັນການພົວພັນທັງແຂ່ງຂັນ, ທັງຮ່ວມມື ແລະ ໄດ້ປະນາມການປະຕິບັດການພິເສດທາງທະຫານຂອງລັດເຊຍ ໃນອູແກຣນ ວ່າ ເປັນການລະເມີດກົດບັດສະຫະປະຊາຊາດ ແລະ ເປັນໄພຄຸກຄາມຮ້າຍແຮງ ເຮັດໃຫ້ມວນມະນຸດໂລກ ໄດ້ຮັບຄວາມຫຍຸ້ງຍາກ. ທ່ານ Andrey Lvanovich Denisov, ເອກອັກຄະລັດຖະທູດລັດເຊຍ ໄດ້ຄັດຄ້ານທຸກຄວາມເວົ້າ ຂອງທູດອາເມລິກາ, ລັດເຊຍ ໄດ້ພະຍາຍາມປະຕິບັດຕາມຂໍ້ຕົກລົງ Minks ຕະຫຼອດມາ ໃນຂະນະທີ່ອີກຝ່າຍ ບໍ່ໃຫ້ການຮ່ວມມືແຕ່ຢ່າງໃດ; ສ່ວນ ສປ ຈີນ ໄດ້ມີຄໍາເຫັນວ່າ: ການປະເຊີນໜ້າກັນຂອງປະເທດທີ່ເປັນສະມາຊິກຖາວອນຂອງສະພາຄວາມໝັ້ນຄົງສະຫະປະຊາຊາດ ໄດ້ຮັບຄວາມສົນໃຈຈາກປະຊາຄົມໂລກ; ຮຽກຮ້ອງບັນດາຝ່າຍກ່ຽວ

ຂ້ອງ ຫັນໜ້າເຂົ້າຫາກັນ ໃຊ້ວິທີທາງການທູດເຈລະຈາ ເພື່ອສັນຕິພາບ ໃນພາກພື້ນ ແລະ ໃນໂລກ; ເຄົາລົບອຳນາດອະທິປະໄຕອັນຄົບຖ້ວນຂອງກັນແລະກັນ ບົນພື້ນຖານກົດບັດສະຫະປະຊາຊາດ ແລະ ກົດໝາຍສາກົນ.

## 3. ສະພາບການພາກພື້ນ ແລະ ສາກົນ

### 1) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກາ

- ເຫດການທີ່ພົ້ນເດັ່ນໃນຂົງເຂດນີ້ ແມ່ນສະຖານະການໃນສີລັງກາ ໂດຍສະເພາະແມ່ນການປະທ້ວງກົດດັນໃຫ້ປະທານາທິບໍດີ ສີລັງກາ ລາອອກຈາກຕຳແໜ່ງ, ເປັນຕົ້ນ ໃນວັນທີ 9/7/2022, ປະຊາຊົນສີລັງກາຫຼາຍພັນຄົນໄດ້ລວມຕົວກັນບຸກເຂົ້າໄປໃນອາຄານທຳນຽບປະທານາທິບໍດີ ແລະ ເຮືອນພັກຂອງນາຍົກລັດຖະມົນຕີສີລັງກາ. ວັນທີ 13/7/2022, ທ່ານ Gotabaya Rakapaksa, ປະທານາທິບໍດີສີລັງກາ ໄດ້ລາອອກຈາກຕຳແໜ່ງ ໜີອອກນອກປະເທດ, ປັດຈຸບັນ ຍັງພັກຕົວຢູ່ ສິງກະໂປ. ທ່ານ Ranil Wickremsighe, ນາຍົກລັດຖະມົນຕີ, ຮັກສາການປະທານາທິບໍດີສີລັງກາ ໄດ້ປະກາດສະພາວະສຸກເສີນໃນຂອບເຂດທົ່ວປະເທດ. ວັນທີ 20/7/2022, ທ່ານ Ranil Wickremesighe ໄດ້ຮັບເລືອກໃຫ້ເປັນປະທານາທິບໍດີສີລັງກາຄົນໃໝ່. ພາຍຫຼັງການເລືອກຕັ້ງ, ໄດ້ມີປະຊາຊົນຈຳນວນໜຶ່ງ ຮວບຕົວກັນປະທ້ວງຢູ່ຕໍ່ໜ້າທຳນຽບປະທານາທິບໍດີ ສະແດງຄວາມຍັງຄັດຄ້ານຕໍ່ຜົນການເລືອກຕັ້ງດັ່ງກ່າວ.

- ສະພາບການເມືອງພາຍໃນຂອງຍີ່ປຸ່ນ, ເກີດເຫດການລອບສັງຫານ ທ່ານ ຊິນໂຊ ອາເບະ, ອະດີດປະທານພັກເສລີປະຊາທິປະໄຕ, ອະດີດນາຍົກລັດຖະມົນຕີຍີ່ປຸ່ນ ໃນວັນທີ 8/7/22 ຜ່ານມາ ທີ່ເມືອງນາຣາ ໃນຂະນະກຳລັງຫາສຽງໃຫ້ກັບ ພັກເສລີປະຊາທິປະໄຕຍີ່ປຸ່ນ (Liberal Democratic Party) ເປັນພັກທີ່ຜູ້ກ່ຽວສັງກັດ ເພື່ອກະກຽມແກ່ການເລືອກຕັ້ງສະມາຊິກສະພາສູງ ໃນວັນທີ 10/07/2022. ຕໍ່ເຫດການດັ່ງກ່າວ, ທ່ານ Kishida, ນາຍົກລັດຖະມົນຕີຍີ່ປຸ່ນ ໄດ້ອອກຖະແຫຼງການສະແດງຄວາມໂສກເສົ້າເສຍໃຈຕໍ່ການສູນເສຍຜູ້ນຳທີ່ຍິ່ງໃຫຍ່ຂອງຊາດ ແລະ ໄດ້ປະນາມຜູ້ກະທຳຜິດ. ບັນດາຜູ້ນຳປະເທດເພື່ອນມິດ ຕ່າງໄດ້ສົ່ງສານສະແດງຄວາມເສຍໃຈ ຕໍ່ເຫດການສະຫຼົດໃຈດັ່ງກ່າວ ລວມທັງ ຜູ້ນຳ ສປປ ລາວ. ວັນທີ 10/7/22, ຍີ່ປຸ່ນ ໄດ້ຈັດການເລືອກຕັ້ງສະມາຊິກລັດຖະສະພາສູງ ຊຶ່ງມີຜູ້ອອກມາໃຊ້ສິດທັງໝົດ 52.05%. ຜົນການເລືອກຕັ້ງແມ່ນ ພັກເສລີປະຊາທິປະໄຕ (ພັກກຳອຳນາດ) ໄດ້ຮັບ 119 ບ່ອນນັ່ງ ຈາກທັງໝົດ 248 ບ່ອນນັ່ງ, ພັກໂກມິອິໂຕະ (ພັກຮ່ວມລັດຖະບານ) 27 ບ່ອນນັ່ງ, ເຮັດໃຫ້ພັກລັດຖະບານມີບ່ອນນັ່ງເກີນ 2/3 ໃນລັດຖະສະພາ. ພັກລັດຖະທຳມະນູນປະຊາທິປະໄຕ 39 ບ່ອນນັ່ງ , ພັກກອມມູນິດຍີ່ປຸ່ນ 11 ບ່ອນນັ່ງ, ພັກນະວັດຕະກຳຍີ່ປຸ່ນ 21 ບ່ອນນັ່ງ, ພັກປະຊາທິປະໄຕເພື່ອປະຊາຊົນ 10 ບ່ອນນັ່ງ, ພັກ Reiwa Shinsengumi 5 ບ່ອນນັ່ງ, ພັກສັງຄົມປະຊາທິປະໄຕ 1 ບ່ອນນັ່ງ, ພັກ Sanseito 1 ບ່ອນນັ່ງ , ພັກ NHK 2 ບ່ອນນັ່ງ, ຜູ້ສະໝັກເອກະລາດ ແລະ ພັກການເມືອງອື່ນໆ 12 ບ່ອນນັ່ງ. ຜົນການເລືອກຕັ້ງດັ່ງກ່າວ ໄດ້ເຮັດໃຫ້ພັກຂອງລັດຖະບານ ມີສຽງສະໜັບສະໜູນສ່ວນໃຫຍ່ ໃນສະພາ ກໍຄືການບໍລິຫານປະເທດ, ສະດວກແກ່ການສະເໜີປັບປຸງແກ້ໄຂ ແລະ ຮັບຮອງເອກະສານສຳຄັນ ແລະ ວຽກງານລວມຂອງຊາດ ເຊັ່ນ: ການຈະປັບປຸງລັດຖະທຳມະນູນຂອງຍີ່ປຸ່ນສະບັບປັດຈຸບັນ ທີ່ປະກາດໃຊ້ມາແຕ່ປີ 1947.

- ກອງປະຊຸມລັດຖະມົນຕີຕ່າງປະເທດ ຂອບການຮ່ວມມື ແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ ຄັ້ງທີ 7 ໄດ້ຈັດຂຶ້ນ ໃນວັນທີ 04 ກໍລະກົດ 2022 ທີ່ເມືອງບາກັນ, ສສ ມຽນມາ, ພາຍໃຕ້ຫົວຂໍ້ : ຄວາມສາມັກຄີປອງດອງ ເພື່ອສັນຕິພາບ ແລະ ຄວາມຈະເລີນຮຸ່ງເຮືອງ (Solidarity for Peace and Prosperity), ມີລັດຖະມົນຕີຕ່າງປະເທດຂອງ 6 ປະເທດເຂົ້າຮ່ວມ (ລາວ, ໄທ, ຫວຽດນາມ, ກຳປູເຈຍ, ມຽນມາ ແລະ ສປ ຈີນ), ເຊິ່ງໄດ້ຕີລາຄາ ແລະ ທົບທວນການຈັດຕັ້ງຜັນຂະຫຍາຍຜົນຂອງກອງປະຊຸມລັດຖະມົນຕີຕ່າງປະເທດຂອບການຮ່ວມມືແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ ຄັ້ງທີ 6 ແລະ ແຜນປະຕິບັດງານ 5 ປີ (2018-2022) ພາຍໃຕ້ 3 ເສົາຄ້ຳ (ການເມືອງ-ຄວາມໝັ້ນຄົງ, ການພັດທະນາແບບຍືນຍົງ ແລະ ການແລກປ່ຽນວັດທະນະທຳ-ສັງຄົມ) ແລະ 5 ຂົງເຂດບູລິມະສິດ (ການເຊື່ອມຈອດ,

ການຄຸ້ມຄອງຊັບພະຍາກອນນ້ຳ, ການຄ້າຂ້າມຊາຍແດນ, ການສ້າງຂີດຄວາມອາດສາມາດໃນການຜະລິດ ແລະ ກະສິກຳ ແລະ ລຶບລ້າງຄວາມທຸກຍາກ). ກອງປະຊຸມ ໄດ້ສະແດງຄວາມຊົມເຊີຍຕໍ່ ສປ ຈີນ ທີ່ໄດ້ປະກອບສ່ວນທຶນ 300 ລ້ານໂດລາສະຫະລັດ ເຂົ້າໃນກອງທຶນພິເສດແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ ນັບແຕ່ປີ 2017 ເປັນຕົ້ນມາ. ມາຮອດປັດຈຸບັນ ມີຫຼາຍກ່ວາ 600 ໂຄງການລວມເປັນມູນຄ່າທັງຫມົດ 80 ກ່ວາລ້ານໂດລາສະຫະລັດ, ໃນນັ້ນ ສປປ ລາວເຮົາໄດ້ຮັບ 68 ໂຄງການ ຄິດເປັນມູນຄ່າລວມ 18 ກ່ວາລ້ານໂດລາສະຫະລັດ. ກອງປະຊຸມ ໄດ້ຮັບຮອງເອົາເອກະສານສຳຄັນ ຈຳນວນ 5 ສະບັບ ຄື: ຖະແຫຼງຂ່າວຮ່ວມ ກອງປະຊຸມລັດຖະມົນຕີຕ່າງປະເທດ ຂອບການຮ່ວມມືແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ ຄັ້ງທີ 7; ຖະແຫຼງການວ່າດ້ວຍ "ການຮ່ວມມືຮັບປະກັນດ້ານສະບຽງອາຫານແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ"; ຖະແຫຼງການວ່າດ້ວຍ "ການຄຸ້ມຄອງ ແລະ ບໍລິຫານດ້ານໄພພິບັດ"; ຖະແຫຼງການວ່າດ້ວຍ "ລົງເລິກການແລກປ່ຽນ ແລະ ຄວາມເຂົ້າໃຈເຊິ່ງກັນ ແລະ ກັນ ເພື່ອຄວາມຈະເລີນຮຸ່ງເຮືອງໃນປະເທດແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ" ແລະ ຖະແຫຼງການວ່າດ້ວຍ "ລົງເລິກການຮ່ວມມືດ້ານພາສີ ເພື່ອຮັບປະກັນສະຖຽນລະພາບດ້ານການຄ້າ ແລະ ອຳນວຍຄວາມສະດວກໃນການຊຳລະສະສາງ ພາຍໃຕ້ຂອບການຮ່ວມມືແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ".

- ອິນໂດເນເຊຍ ໄດ້ເປັນເຈົ້າພາບຈັດກອງປະຊຸມລັດຖະມົນຕີຕ່າງປະເທດ ກຸ່ມປະເທດ G20 ລະຫວ່າງວັນທີ 7-8/7/2022 ພາຍໃຕ້ຫົວຂໍ້: ຮ່ວມກັນສ້າງໂລກໃຫ້ມີສັນຕິພາບ, ສະຖຽນລະພາບ ແລະ ຄວາມຈະເລີນຮຸ່ງເຮືອງ. ກອງປະຊຸມ ໄດ້ຕົກລົງເຫັນດີຫຼາຍບັນຫາເປັນຕົ້ນແມ່ນການຮັບປະກັນທາງດ້ານສະບຽງອາຫານ ແລະ ພະລັງງານ, ການແກ້ໄຂບັນຫາເສດຖະກິດ-ສັງຄົມ ແບບຍືນຍົງ, ການສົ່ງເສີມການຮ່ວມມືຫຼາຍຝ່າຍ, ສົ່ງເສີມຄວາມໝັ້ນຄົງ, ສັນຕິພາບ ແລະ ການພັດທະນາ ແລະ ອື່ນໆ. ໃນໂອກາດດັ່ງກ່າວ, ທ່ານ ຫວັງອີ້, ລັດຖະມົນຕີຕ່າງປະເທດ ສປ ຈີນ ແລະ ທ່ານ ແອນໂທນີ ບລິງເຄັນ, ລັດຖະມົນຕີຕ່າງປະເທດ ສ.ອາເມລິກາ ໄດ້ພົບປະກັນ, ຊຶ່ງ ທ່ານ ຫວັງອີ້ ໄດ້ກ່າວວ່າ ປັດຈຸບັນການພົວພັນລະຫວ່າງ ສປ ຈີນ-ອາເມລິກາ ນັບມື້ນັບຕົກອອກຫ່າງ, ຮຽກຮ້ອງໃຫ້ເຄົາລົບອະທິປະໄຕຂອງກັນ ແລະ ກັນ; ຮ່ວມມືກັນແກ້ໄຂບັນຫາ ພາກພື້ນ ແລະ ສາກົນ. ຂະນະທີ່ ທ່ານ ບລິງເຄັນ ໄດ້ກ່າວວ່າ ການສະໜັບສະໜູນລັດເຊຍຂອງ ສປ ຈີນ ໃນຂໍ້ຂັດແຍ່ງ ອູແກຣນ ຍິ່ງເຮັດໃຫ້ການພົວພັນສອງຝ່າຍສັບຊ້ອນຂຶ້ນໄປຕື່ມ.

- ກອງປະຊຸມລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງ ຂອງກຸ່ມປະເທດ G20 ຄັ້ງທີ 3 ໄດ້ຈັດຂຶ້ນຢູ່ເກາະບາຫຼີ, ອິນໂດເນເຊຍ ໃນວັນທີ 15-16/7/2022 ດ້ວຍຮູບແບບເຊິ່ງໜ້າ ແລະ ທາງໄກ, ໄດ້ປຶກສາຫາລືໃນຫຼາຍບັນຫາໂດຍສະເພາະຄວາມໝັ້ນຄົງທາງດ້ານສະບຽງອາຫານ, ສະພາບການເສດຖະກິດຂອງໂລກ, ສາທາລະນະສຸກສາກົນ, ໂຄງສ້າງດ້ານການເງິນສາກົນ, ການປະຕິຮູບຂະແໜງການການເງິນ, ການລົງທຶນດ້ານພື້ນຖານໂຄງລ່າງ ແລະ ອື່ນໆ. ກອງປະຊຸມຍັງໄດ້ເຫັນດີສືບຕໍ່ໃຫ້ການຊ່ວຍເຫຼືອບັນດາປະເທດທີ່ກຳລັງພັດທະນາ, ປັບປຸງໂຄງສ້າງດ້ານການເງິນສາກົນ ແລະ ຍົກສູງຄວາມສາມາດລະບົບການເງິນທົ່ວໂລກ.

- ວັນທີ 9/7/22, ທ່ານ ແອນໂທນີ ບລິງເກັນ, ລັດຖະມົນຕີຕ່າງປະເທດອາເມລິກາ ໄດ້ຢ້ຽມຢາມລາຊະອານາຈັກໄທ ເປັນຄັ້ງທຳອິດ ນັບແຕ່ໄດ້ຮັບຕຳແໜ່ງ, ເຊິ່ງໄດ້ພົບກັບ ທ່ານ ດອນ ປະຮະມັດວິໄນ, ລັດຖະມົນຕີຕ່າງປະເທດໄທ ໂດຍການເຂົ້າຮ່ວມຂອງ ທ່ານ ປຣະຢຸດ ຈັນໂອຊາ, ເຊິ່ງສອງຝ່າຍ ໄດ້ເນັ້ນໜັກເຖິງຄວາມສຳຄັນໃນການເປັນພັນທະມິດທີ່ດີແຕ່ອະດີດເຖິງປັດຈຸບັນ, ມີການລົງນາມເອກະສານສຳຄັນ 2 ສະບັບ ຄື: 1) ຖະແຫຼງການວ່າດ້ວຍການເປັນພະມິດ ແລະ ເປັນຄູ່ຮ່ວມຍຸດທະສາດ; 2) ບົດບັນທຶກຄວາມເຂົ້າໃຈ (MOU) ວ່າດ້ວຍການສົ່ງເສີມຄວາມເຂັ້ມແຂງຕ່ອງໂສ້ອາຫານ ເພື່ອໃຫ້ມີຄວາມຫຼາຍຫຼາຍ ແລະ ໝັ້ນຄົງ. ອາເມລິກາ ເປັນຕະຫຼາດສົ່ງອອກ ແລະ ເປັນຜູ້ລົງທຶນ ອັນດັບ 3 ຂອງໄທ, ອາເມລິກາ ແລະ ໄທ ຈະເສີມຂະຫຍາຍເສດຖະກິດຮ່ວມກັນ ຜ່ານຂອບການຮ່ວມມືເສດຖະກິດອິນໂດ-ປາຊີຟິກ.

**2). ສະພາບການ ໃນຂົງເຂດເອີຣົບ-ອາເມຣິກາ**

ສະພາບຄວາມເຄັ່ງຕຶງ ຢູ່ອູແກຣນ ຍັງສືບຕໍ່ພັນແປ, ບັນດາປະເທດຕາເວັນຕົກ ໄດ້ດຳເນີນຫຼາຍກອງປະຊຸມ, ເຊິ່ງ ສ່ວນໃຫຍ່ ແມ່ນສະໜັບສະໜູນດ້ານງົບປະມານ ແລະ ອື່ນໆ ໃຫ້ແກ່ອູແກຣນ ເຊັ່ນ:

- ວັນທີ 26-28/6/2022, ເຢຍລະມັນ ເປັນເຈົ້າພາບຈັດກອງປະຊຸມສຸດຍອດບັນດາຜູ້ນຳກຸ່ມປະເທດ G7 ຄັ້ງທີ 48, ມີຜູ້ນຳປະເທດສະມາຊິກ G7, ສ.ອາເມລິກາ, ອັງກິດ, ຝຣັ່ງ, ເຢຍລະມັນ, ອີຕາລີ, ການາດາ ແລະ ຍີ່ປຸ່ນ ແລະ ຕົວແທນ ຈາກຫຼາຍປະເທດ ແລະ ອົງການຈັດຕັ້ງສາກົນ ຖືກເຊີນເຊັ່ນ: ອິນໂດເນເຊຍ, ອິນເດຍ, ອາກຊັງຕິນ, ເຊເນການ, ອາຟຣິກກາໃຕ້, ອູແກຣນ, UN, EU, WTO, WHO ເຂົ້າຮ່ວມ. ກອງປະຊຸມ ໄດ້ປຶກສາຫາຫຼາຍບັນຫາ ເສດຖະກິດ, ຄວາມໝັ້ນຄົງ, ໃນນັ້ນ ໄດ້ຕົກລົງເຫັນດີ ໃຫ້ທຶນຊ່ວຍເຫຼືອ ອູແກຣນ; ການລະດົມທຶນ 600 ຕື້ໂດລາ ໃນການສົ່ງເສີມບັນດາປະເທດທີ່ກຳລັງພັດທະນາ ໂດຍ ອາເມລິກາ ໄດ້ປະກາດຈະປະກອບສ່ວນ 200 ຕື້ໂດລາສະຫະລັດ ເທົ່າກັບ 1/3 ຂອງທຶນທັງໝົດ; ໄດ້ຕົກລົງເພີ່ມມາດຕະການຂວ້ຳບາດຕໍ່ລັດເຊຍ (ໂຈະການນຳເຂົ້າຄຳຈາກລັດເຊຍ); ການຮັບປະກັນການສະໜອງພະລັງງານ ແລະ ອາຫານໃຫ້ພຽງພໍ; ການຮັບມືກັບໄພເງິນເຟີ້ ແລະ ການປ່ຽນແປງຂອງດິນຟ້າອາກາດ. ສປ ຈີນ ໄດ້ໃຫ້ທັດສະນະສະໜັບສະໜູນນະໂຍບາຍລວມ ຂອງ ກຸ່ມປະເທດອຸດສາຫະກຳ G7 ເພື່ອການພັດທະນາຂອງບັນດາປະເທດທີ່ກຳລັງພັດທະນາ, ແຕ່ບໍ່ສະໜັບສະໜູນການພັດທະນາ ຂອງພວກເຂົາທີ່ມີລັກສະນະແອບແຝງ ເພື່ອຕ້ານກັບນະໂຍບາຍຂອງ ສປ ຈີນ ແລະ ການຂວ້ຳບາດຈາກຫຼາຍຝ່າຍຕໍ່ຝ່າຍດຽວ.

- ວັນທີ 28-30/6/2022, ກອງປະຊຸມສຸດຍອດ NATO ໄດ້ຈັດຂຶ້ນທີ່ ນະຄອນຫຼວງ Madrid, ປະເທດແອັດສະປາຍ, ມີຜູ້ນຳ ຂອງ 30 ປະເທດສະມາຊິກ, ຕົວແທນຈາກຫຼາຍປະເທດ ຖືກເຊີນເຂົ້າຮ່ວມ ເຊັ່ນ: EU, ຍີ່ປຸ່ນ, ສ.ເກົາຫຼີ, ອົດສະຕຣາລີ, ໂອຕຣິດ, ນູແວນເຊລັງ, ຊອກຊີ, ຊູແອດ ແລະ ແຟງລັງ. ກອງປະຊຸມໄດ້ຕົກລົງເຫັນດີໃນຫຼາຍບັນຫາສຳຄັນເປັນຕົ້ນ ການກຳນົດຈະແຈ້ງວ່າ ລັດເຊຍ ແລະ ສປ ຈີນ ເປັນໄພຄຸກຄາມໂດຍກົງຕໍ່ຄວາມໝັ້ນຄົງຂອງ NATO, ການກຳນົດນະໂຍບາຍທາງດ້ານການເມືອງ ແລະ ການທະຫານ, ຍຸດທະສາດໃນໄລຍະໃໝ່ ເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ແກ່ NATO, ຮັບຮອງແຜນການເພີ່ມຈຳນວນທະຫານໃຫ້ຫຼາຍກວ່າ 3 ແສນຄົນ, ການຂະຫຍາຍຄັງອາວຸດໃຫ້ຫຼາຍຂຶ້ນ ແລະ ຈະເພີ່ມການຊ່ວຍເຫຼືອອູແກຣນ. ພ້ອມກັນນັ້ນ, ໄດ້ຕົກລັງຈະຮັບ ຊູແອດ ແລະ ແຟງລັງ ເຂົ້າເປັນສະມາຊິກ NATO. ກອງປະຊຸມສຸດຍອດ NATO ທຸກຄັ້ງ, ມີປະຊາຊົນຂອງຫຼາຍປະເທດສະມາຊິກເດີນຂະບວນປະທ້ວງ ແລະ ຄັ້ງນີ້, ປະຊາຊົນການາດາ ແລະ ປະຊາຊົນແອັດສະປາຍ ໄດ້ລວມຕົວປະທ້ວງ ຍົກປ້າຍ ”ບໍ່ເອົານາໂຕ ບໍ່ເອົາສົງຄາມ ເພື່ອຄວາມສະຫງົບສຸກ” ຮຽກຮ້ອງໃຫ້ລັດຖະບານ ຖອນຕົວອອກຈາກກຸ່ມນາໂຕ ແລະ ຢຸດຕິການສົ່ງອາວຸດຊ່ວຍເຫຼືອໃນສະຖານະການອູແກຣນ, ຫຼຸດຜ່ອນງົບປະມານທາງການທະຫານ ເພື່ອສຸມໃສ່ການສົ່ງເສີມເສດຖະກິດຂອງຕົນດີກວ່າ.

- ສຳລັບຄວາມເຄັ່ງຕຶງຢູ່ ອູແກຣນ ໃນເດືອນ ກໍລະກົດ 2022 ແມ່ນລັດເຊຍໄດ້ປະຕິບັດການ ຢູ່ພາກຕາເວັນອອກຂອງ ອູແກຣນ, ຂົງເຂດ Donbass ສາມາດປົດປ່ອຍ ແລະ ຄຸ້ມຄອງພື້ນທີ່ສ່ວນໃຫຍ່ ໃນ ສາທາລະນະລັດປະຊາຊົນ Luhansk ແລະ Donetsk. ນອກຈາກນັ້ນ, ໄດ້ມີການແລກປ່ຽນຊະເລີຍເສິກລະຫວ່າງອູ ແກຣນ ແລະ ລັດເຊຍ ຈຳນວນ 144 ຄົນ. ສະພາລັດເຊຍ ໄດ້ຜ່ານຮ່າງກົດໝາຍ ກຳນົດໃຫ້ບໍລິສັດຂອງລັດເຊຍ ຈັດສົ່ງອຸປະກອນຕ່າງໆທີ່ຈຳເປັນ ເພື່ອຊ່ວຍກອງທັບລັດເຊຍປະຕິບັດການທາງທະຫານຢູ່ອູແກຣນ. ສ່ວນ ປະທານາທິບໍດີອູແກຣນ ໄດ້ສັ່ງປົດ ທ່ານ Ivan Bakanov, ຫົວໜ້າໜ່ວຍງານຄວາມໝັ້ນຄົງແຫ່ງ ອູແກຣນ (SBU) ແລະ ທ່ານ Gregory Galagun, ຮອງຫົວໜ້າສະພາຄວາມໝັ້ນຄົງ, ຫົວໜ້າປ້ອງກັນຄວາມສະຫງົບອູແກຣນ ແລະ ທ່ານ ນ. Iryna Vendiktova, ໄອຍະການສູງສຸດ ພ້ອມດ້ວຍເຈົ້າໜ້າທີ່ ໄອຍະການ ແລະ ກົດໝາຍ ຫຼາຍກວ່າ 60 ຄົນ ໂດຍອ້າງວ່າພວກກ່ຽວເປັນສາຍລັບໃຫ້ ລັດເຊຍ ເພື່ອຕ້ານກັບ ອູແກຣນ.

ໃນວັນທີ 22/07/2022, ຕວັກກີ ໄດ້ເປັນຕົວກາງປະສານ ແລະ ມີການເຂົ້າຮ່ວມຂອງ ສະຫະປະຊາຊາດ ໃນພິທີລົງນາມ ຂໍ້ຕົກລົງ ລະຫວ່າງ ລັດເຊຍ ແລະ ອູແກຣນ ກ່ຽວກັບການຂົນສົ່ງທັນຍາພືດ, ສະບຽງອາຫານ ແລະ ຝຸ່ນຂອງອູແກຣນ ໄປຍັງຕະຫຼາດສາກົນ ຜ່ານທາງທະເລດຳ.

ອາເມລິກາ ແລະ ພັນທະມິດ ສືບຕໍ່ໃຫ້ການຊ່ວຍເຫຼືອດ້ານການທະຫານແກ່ອູແກຣນ ເຊັ່ນ: ອາເມລິກາ ເພີ່ມອີກ 820 ລ້ານໂດລາ, ອັງກິດ ຈະສະໜອງລະບົບປ້ອງກັນອາກາດທີ່ທັນສະໄໝ ປະກອບມີຍົນໂດຣນ ອຸປະກອນສົງຄາມເອເລັກໂຕຣນິກ ແລະ ອື່ນໆ ລວມມູນຄ່າ 1 ຕື້ຢູໂຣ (1.2 ຕື້ໂດລາສະຫະລັດ) ແລະ ອັງກິດຈະເປັນເຈົ້າພາບຈັດກອງປະຊຸມຟື້ນຟູອູແກຣນ ໃນປີ 2023, ພາຍຫຼັງທີ່ກອງປະຊຸມຟື້ນຟູອູແກຣນ ຄັ້ງທຳອິດໄດ້ຈັດຂຶ້ນ ໃນວັນທີ 4 ກໍລະກົດ 2022 ທີ່ປະເທດສະວິດສະແລນ, ມີຕົວແທນຈາກປະເທດເອີຣົບຕາເວັນຕົກ ແລະ ພັນທະມິດ 40 ກວ່າປະເທດ, ອົງການຈັດຕັ້ງສາກົນ ກວ່າ 20 ອົງການ ເຂົ້າຮ່ວມປຶກສາຫາລືແນວທາງຟື້ນຟູອູແກຣນ ໃນທຸກດ້ານ ແລະ ໄດ້ຕົກລົງເຫັນດີຈະສະໜອງງົບປະມານແກ່ອູແກຣນ ຕາມການສະເໜີ 750 ຕື້ໂດລາສະຫະລັດ; EU ໄດ້ຍຶດຊັບສິນຂອງລັດເຊຍ ປະມານ 13,83 ຕື້ໂດລາ ແລະ ຈະສະໜອງທຶນກູ້ຢືມໃຫ້ອູແກຣນ ຕື່ມອີກ 1 ຕື້ເອີໂຣ, ຈະໃຫ້ການຊ່ວຍເຫຼືອ ອູແກຣນ ຕື່ມອີກ 500 ລ້ານເອີໂຣ.

- ສະພາບການໃນລາຊະອານາຈັກອັງກິດ: ນາຍົກລັດຖະມົນຕີອັງກິດ, Boris Johnson ໄດ້ປະເຊີນກັບຄວາມກົດດັນໃນການບໍລິຫານປະເທດ ຍ້ອນຄວາມບໍ່ເປັນເອກະພາບກັນພາຍໃນພັກອະນຸລັກນິຍົມ ເຖິງແມ່ນວ່າຜົນການລົງມະຕິຂອງສະມາຊິກພາຕໍ່າ ສັງກັດພັກອະນຸລັກນິຍົມ ໃນເດືອນມິຖຸນາ 2022 ຜ່ານມາ ຍັງມີມະຕິໄວ້ວາງໃຈຕໍ່ນາຍົກ Boris Johnson ດ້ວຍຄະແນນ 221/148 ສຽງ ກໍຕາມ. ແຕ່ຮອດວັນທີ 5 ກໍລະກົດ 2022, ລັດຖະມົນຕີກະຊວງການເງິນ ແລະ ລັດຖະມົນຕີກະຊວງສາທາລະນະສຸກ ໄດ້ລາອອກຈາກຕຳແໜ່ງ ໂດຍກ່າວວ່າ ບໍ່ສາມາດຮ່ວມງານກັບລັດຖະບານຊຸດນີ້ທີ່ມີຂ່າວເສຍຫາຍຫຼາຍຢ່າງ, ບໍ່ເຫັນດີຕໍ່ການດຳເນີນນະໂຍບາຍທີ່ຜິດພາດຂອງນາຍົກລັດຖະມົນຕີ ຕໍ່ການຂວ້ຳບາດລັດເຊຍ ເຊິ່ງສົ່ງຜົນໃຫ້ເກີດວິກິດເສດຖະກິດຮ້າຍແຮງ, ພາວະເງິນເຟີ້ ເພີ່ມຂຶ້ນຢູ່ໃນລະດັບ 9.1%, ລາຄາສິນຄ້າ, ພະລັງງານນ້ຳມັນ, ແກັສທຳມະຊາດ, ຄ່າໄຟຟ້າ ແລະ ອື່ນໆ ສູງຂຶ້ນເລື້ອຍໆ ກະທົບຕໍ່ປະຊາຊົນທີ່ມີລາຍໄດ້ຕ່ຳ. ການລາອອກຂອງບຸກຄົນສຳຄັນທັງສອງ ໄດ້ເຮັດໃຫ້ບັນດາລັດຖະມົນຕີອາວຸໂສສຳຄັນຕ່າງໆ ແລະ ບັນດາຜູ້ຊ່ວຍ ຫຼາຍກວ່າ 50 ທ່ານ ໄດ້ທະຍອຍຍື່ນຈົດໝາຍລາອອກ. ວັນທີ 7 ກໍລະກົດ 2022, ທ່ານ Boris Johnson ໄດ້ຕົກລົງລາອອກຈາກຕຳແໜ່ງຫົວໜ້າພັກອະນຸລັກນິຍົມ (ພັກກຳອຳນາດໃນລັດຖະບານ) ແຕ່ຍັງຈະສືບຕໍ່ເປັນນາຍົກລັດຖະມົນຕີ ຈົນກວ່າຈະໄດ້ຫົວໜ້າພັກຜູ້ໃໝ່ ໂດຍຈະເລີ່ມຂະບວນການເລືອກຕັ້ງພາຍໃນພັກ ໃຫ້ສຳເລັດກ່ອນຮອດກອງປະຊຸມ ພັກອະນຸລັກນິຍົມ ໃນຕົ້ນເດືອນ ຕຸລາ 2022.

**3). ສະພາບການໃນຂົງເຂດຕາເວັນອອກກາງ**

ບັນດາປະເທດມະຫາອຳນາດ ໄດ້ໃຫ້ຄວາມສຳຄັນ ໃນຂົງເຂດຕາເວັນອອກກາງ ສະແດງອອກຈາກການຢ້ຽມຢາມ ທີ່ເກີດຂຶ້ນໃນເດືອນກໍລະກົດ 2022 ເຊັ່ນ:

- ວັນທີ 13-16/7/2022, ທ່ານ Joe Biden, ປະທານາທິບໍດີ ສ.ອາເມລິກາ ໄດ້ເດີນທາງຢ້ຽມຢາມບັນດາປະເທດໃນຕາເວັນອອກກາງ ແລະ ພົບປະກັບຜູ້ນຳກຸ່ມປະເທດສົ່ງອອກນ້ຳມັນ (OPEC) ເພື່ອຮຽກຮ້ອງໃຫ້ເພີ່ມກຳລັງການຜະລິດ. ພ້ອມນີ້, ຍັງໄດ້ປຶກສາຫາລືກັນໃນຫຼາຍບັນຫາເປັນຕົ້ນ ການພົວພັນອິນເດຍ ກັບ ສປ ຈີນ ແລະ ລັດເຊຍ, ບັນຫານິວເຄຍອີຣານ, ຂໍ້ຂັດແຍ່ງອິດສະຣາແອນ-ປາແລດຕິນ ແລະ ການພົວພັນອິດສະຣາແອນ ກັບ ບັນດາປະເທດອາຣັບ, ຮຽກຮ້ອງໃຫ້ ອາຣັບບີ ຊາອຸດິດ ແລະ ເອເມຣັດ ອາຣັບ ເພີ່ມກຳລັງການຜະລິດນ້ຳມັນ, ແຕ່ສອງປະ

ເຫດດັ່ງກ່າວ ຍຶດໝັ້ນຫຼັກການຂອງກຸ່ມ OPEC, ບໍ່ສາມາດຜະລິດປະລິມານນ້ຳມັນຫໍເກີນ ຕາມການສະເໜີຂອງອາເມ ລິກາ.

- ວັນທີ 19-20/7/2022, ທ່ານ Vladimir Putin, ປະທານາທິບໍດີລັດເຊຍ ໄດ້ເດີນທາງຢ້ຽມຢາມ ອີຣານ ເພື່ອເຂົ້າຮ່ວມກອງປະຊຸມສຸດຍອດ 3 ຝ່າຍ (ລັດເຊຍ, ຕວັກກີ ແລະ ອີຣານ). ທ່ານ Putin ໄດ້ພົບປະກັບ ທ່ານ Ayatollah Ali Khamenei, ຜູ້ນຳສູງສຸດອີຣານ ແລະ ທ່ານ Ebrahim Raisi, ປະທານາທິບໍດີອີຣານ. ສອງ ຝ່າຍເຫັນດີຮ່ວມກັນໃນການຍົກລະດັບການຮ່ວມມືໃນໄລຍະຍາວ ໃນຂົງເຂດການຂົນສົ່ງ ແລະ ການຄ້າ ເພື່ອຕ້ານ ການຂວ້ຳບາດຈາກຕາເວັນຕົກ, ຮ່ວມກັນເຊັນ MOU ໃນການສຳຫຼວດ ແລະ ພັດທະນາແກ໋ສທຳມະຊາດ ແລະ ນ້ຳ ມັນ ໃນອີຣານ ທີ່ມີມູນຄ່າຫຼາຍກວ່າ 40 ຕື້ໂດລາສະຫະລັດ, ສົ່ງເສີມການນຳໃຊ້ສະກຸນເງິນຂອງສອງຊາດ ເພື່ອ ຫຼຸດຜ່ອນການຂຶ້ນກັບເງິນໂດລາສະຫະລັດ ໃນເວທີການຄ້າໂລກ. ໃນໂອກາດດຽວກັນ, ທ່ານ Putin ຍັງໄດ້ພົບປະກັບ ທ່ານ Recep Tayyip Erdogan, ປະທານາທິບໍດີ ຕວັກກີ ທີ່ໄດ້ເດີນທາງຢ້ຽມຢາມອີຣານເຊັ່ນກັນ. ສອງຝ່າຍໄດ້ ປຶກສາຫາລືກ່ຽວກັບຄວາມໝັ້ນຄົງໃນຊີຣີ ແລະ ການເປີດເສັ້ນທາງການສົ່ງອອກຜົດພັນທັນຍາຫານ ຜ່ານທະເລດຳ. ສຳລັບກອງປະຊຸມສຸດຍອດສາມຝ່າຍ ໄດ້ສືບຕໍ່ປຶກສາຫາລືຫຼາຍບັນຫາສຳຄັນ ເປັນຕົ້ນແມ່ນ ຄວາມໝັ້ນຄົງ ໃນຕາ ເວັນອອກກາງ, ບັນຫາຊີຣີ ເພື່ອສັນຕິພາບ, ຄວາມສະເໝີພາບ ແລະ ອື່ນໆ. ກອງປະຊຸມ ໄດ້ອອກຖະແຫຼງການຮ່ວມ ທີ່ເນັ້ນເຖິງບົດບາດສຳຄັນໃນການແກ້ໄຂບັນຫາຊີຣີດ້ວຍສັນຕິວິທີ ແລະ ຍືນຍົງ ບົນພື້ນຖານກົດບັດຂອງ ສປຊ. ການ ຢ້ຽມຢາມໃນຊ່ວງເວລານີ້ ເປັນການສະແດງໃຫ້ເຫັນວ່າມາດຕະການຂວ້ຳບາດຂອງຕາເວັນຕົກ ຕໍ່ລັດເຊຍ ບໍ່ສາມາດ ໂດດດ່ຽວລັດເຊຍໄດ້.

**ແຫຼ່ງຂ່າວອ້າງອີງ** :Vietnam News, Vietnam- Express, VNS, Xinhua, CNA, Global Times, Yonhap, CRI, Khmer Times, Aljazeera, RT, Kpl, Lao National Radio, Sputnik, Yonhap, BBC, CNN, AFP, NHK, Aljazeera, CGTN, Reuters, Nournews, TNN, Thai TBS, Top news, ສະຖານທູດລາວ ຢູ່ລັດເຊຍ, ກະຊວງການຕ່າງ ປະເທດລາວ, ກົມ ອປອ ຄຕພ, ກົມ ອອ ຄຕພ.

# II. ການເຄື່ອນໄຫວວຽກງານ ຂອງການນຳພັກ ປປ ລາວ

## ຄະນະຜູ້ແທນຂັ້ນສູງຂອງພັກ ປປ ລາວ ເຂົ້າຮ່ວມກອງປະຊຸມສຳມະນາສາກົນ ຂອງ ບັນດາພັກການເມືອງລັດທິມາກ ຜ່ານວິດີໂອທາງໄກ




ວັນທີ 28 ກໍລະກົດ 2022, ທີ່ຫ້ອງວ່າການສູນກາງພັກ ນະຄອນຫຼວງວຽງຈັນ, ຄະນະຜູ້ແທນຂັ້ນສູງຂອງ ພັກ ປປ ລາວ ນຳໂດຍ ສະຫາຍ ນາງ ປານີ ຢາທໍ່ຕູ້, ກຳມະການກົມການເມືອງສູນກາງພັກ, ຮອງປະທານປະເທດ ແຫ່ງ ສປປ ລາວ ໄດ້ເຂົ້າຮ່ວມກອງປະຊຸມສຳມະນາສາກົນ ຂອງ ບັນດາພັກການເມືອງລັດທິມາກ ທີ່ ພັກກອມມູນິດຈີນ ເປັນເຈົ້າພາບຈັດຂຶ້ນຜ່ານວິດີໂອທາງໄກ ພາຍໃຕ້ຫົວຂໍ້: “ການໝູນໃຊ້ທິດສະດີລັດທິມາກ ໃຫ້ແທດເໝາະກັບສະພາບການຂອງປະເທດຕົນເອງ ແລະ ຍຸກສະໄໝປະຈຸບັນ ຂອງ ລັດທິມາກ ໃນສັດຕະວັດທີ 21”, ເຊິ່ງມີຜູ້ຕາງໜ້າບັນດາພັກການເມືອງ ແລະ ອົງການຈັດຕັ້ງທາງສັງຄົມ ທີ່ຍຶດໝັ້ນໃນລັດທິມາກ ເຂົ້າຮ່ວມທັງໝົດ 100 ກວ່າພັກ ຈາກ 70 ກວ່າປະເທດ ເຂົ້າຮ່ວມ. ສະຫາຍ ນາງ ປານີ ຢາທໍ່ຕູ້ ໄດ້ຕີລາຄາສູງຕໍ່ການຈັດກອງປະຊຸມດັ່ງກ່າວຂອງ ພັກກອມມູນິດຈີນ ວ່າ ເປັນໂອກາດດີໃຫ້ບັນດາພັກການເມືອງລັດທິມາກ ໃນໂລກ ໄດ້ແລກປ່ຽນບົດຮຽນທາງດ້ານທິດສະດີ ແລະ ພຶດຕິກຳຕົວຈິງນຳກັນ; ໄດ້ຕີລາຄາສູງ ແລະ ຊົມເຊີຍຜົນສຳເລັດຂອງ ພັກກອມມູນິດຈີນ ທີ່ໄດ້ສືບຕໍ່ຢຶດ ໝັ້ນ ແລະ ໝູນໃຊ້ທິດສະດີມາກ ໃຫ້ແທດເໝາະກັບສະພາບການຕົວຈິງຂອງ ສປ ຈີນ ຢ່າງມີຜົນສຳເລັດ, ໂດຍໄດ້ສະເໜີອອກ ແນວຄິດເໝົາເຈີຕຶງ, ທິດສະດີເຕິ້ງສຽວຜິງ, ແນວຄິດສຳຄັນ 3 ຕົວແທນ, ແນວຄິດສີຈິ້ນຜິງ ວ່າດ້ວຍສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ ໃນຍຸກສະໄໝໃໝ່, ອັນໄດ້ເຮັດໃຫ້ການນຳພາຂອງ ພັກກອມມູນິດຈີນ ຍິ່ງມີຄວາມໜັກແໜ້ນ, ເຂັ້ມແຂງ, ສືບຕໍ່ມີຜົນສຳເລັດໃໝ່ ໃຫຍ່ຫຼວງກວ່າເກົ່າ. ສະຫາຍ ນາງ ປານີ ຢາທໍ່ຕູ້ ຍັງໄດ້ຍົກໃຫ້ເຫັນບາງບົດຮຽນ ແລະ ຜົນສຳເລັດຂອງພັກ ປປ ລາວ ໃນການໝູນໃຊ້ລັດທິມາກ ແລະ ແນວຄິດ ປະທານ ໄກສອນ ພົມວິຫານ ຢູ່ ສປປ ລາວ, ໂດຍສະເພາະແມ່ນບົດຮຽນໃນການສ້າງ ແລະ ບູລະນະ ລະບອບປະຊາທິປະໄຕ ປະຊາຊົນ ຕາມທິດສັງຄົມນິຍົມ ບົນພື້ນຖານການຢຶດໝັ້ນອຸດົມການພັດທະນາປະເທດ ກ້າວຂຶ້ນຕາມຈຸດໝາຍສັງຄົມນິຍົມ, ພັກ ໄດ້ນຳພາປະຊາຊົນ ບູລະນະ ລະບອບປະຊາທິປະໄຕປະຊາຊົນ ໃຫ້ສົມບູນຂຶ້ນເປັນກ້າວໆ ຕາມເນື້ອໃນ 9 ປະຖົມປັດໄຈ ເພື່ອສ້າງພື້ນຖານໃຫ້ແກ່ການກໍ່ຕົວ ແລະ ຂະຫຍາຍຕົວ ຂອງຮູບຖານເສດຖະກິດ-ສັງຄົມ ສັງຄົມນິຍົມ; ຮຽກຮອງໃຫ້ບັນດາພັກການເມືອງລັດທິມາກ ເພີ່ມພະລັງແຫ່ງຄວາມສາມັກຄີ, ປະສານສົມທົບເຊິ່ງກັນແລະກັນ, ແລກປ່ຽນບົດຮຽນທາງດ້ານ

ທິດສະດີ ແລະ ພຶດຕິກຳ ແລະ ຮ່ວມມືກັນຢ່າງແໜ້ນແຟ້ນ ເພື່ອເປັນກຳລັງແຮງໜຶ່ງໃນການຊຸກຍູ້ການພັດທະນາຂອງມວນມະນຸດ ຕາມທ່າອ່ຽງຍຸກສະໄໝແຫ່ງການຫັນເປັນໂລກາພິວັດ ແລະ ການຮ່ວມມືແບບຫຼາຍຂົ້ວ, ຫຼາຍຝ່າຍ, ປະກອບສ່ວນເຂົ້າໃນພາລະກິດການຕໍ່ສູ້ເພື່ອຄວາມກ້າວໜ້າທາງສັງຄົມ ກໍຄື ການປົກປັກຮັກສາສັນຕິພາບ ແລະ ສະຖຽນລະພາບໃນພາກພື້ນ ແລະ ໃນໂລກ.

# III. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

## 1. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ລາວ-ຈີນ ພົບປະຜ່ານວີດີໂອທາງໄກ




ວັນທີ 22 ກໍລະກົດ 2022, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໄດ້ພົບປະເຮັດວຽກຜ່ານວີດີໂອທາງໄກກັບ ສະຫາຍ ຫຼິວ ຈ້ຽນຊາວ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ. ສອງຝ່າຍ ໄດ້ເອກະພາບກັນຕີລາຄາສູງ ແລະ ໃຫ້ຄວາມສຳຄັນໃນລະດັບສູງຕໍ່ການພົວພັນ ລາວ-ຈີນ ໃຫ້ການສະໜັບສະໜູນເຊິ່ງກັນແລະກັນ, ຮັກສາໄດ້ກົນໄກການພົບປະປະຈຳປີລະຫວ່າງ ເລຂາທິການໃຫຍ່, ປະທານປະເທດ ແລະ ການນຳຂັ້ນຕ່າງໆ ຂອງສອງພັກ, ສອງລັດ ລາວ-ຈີນ, ເຊິ່ງເປັນການເສີມສ້າງຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນແລະກັນຢ່າງເລິກເຊິ່ງ ແລະ ເປັນພື້ນຖານອັນໜັກແໜ້ນໃຫ້ແກ່ການຮ່ວມມືໃນຂະແໜງການອື່ນໆ. ພາຍໃຕ້ການນຳພາຊີ້ນຳຢ່າງໃກ້ຊິດ ຂອງ ການນຳສູງສຸດ ຂອງ ສອງພັກ, ສອງລັດ ລາວ-ຈີນ ໄດ້ເຮັດໃຫ້ແຜນການຮ່ວມມື ລະຫວ່າງ ສອງພັກ ແລະ ແຜນການຮ່ວມມືບຳລຸງສ້າງພະນັກງານ ລາວ-ຈີນ ທີ່ສອງພັກ, ສອງລັດ ໄດ້ລົງນາມຮ່ວມກັນໃນທ້າຍປີ 2021 ໄດ້ຮັບການຈັດຕັ້ງປະຕິບັດ, ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງປະເທດ.

ໃນໂອກາດດັ່ງກ່າວ, ສະຫາຍ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຊົມເຊີຍຕໍ່ ສະຫາຍ ຫຼິວ ຈ້ຽນຊາວ ທີ່ໄດ້ຮັບການແຕ່ງຕັ້ງເປັນ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ຄົນໃໝ່ ແລະ ຈະສືບຕໍ່ຮ່ວມມືໃຫ້ແໜ້ນແຟ້ນຍິ່ງຂຶ້ນ ເພື່ອປະກອບສ່ວນເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ທີ່ເປັນມູນເຊື້ອ, ການຮ່ວມມືແບບຄູ່ຮ່ວມຍຸດທະສາດ, ຮອບດ້ານ, ໝັ້ນຄົງ ຍາວນານ ຕາມທິດ 4 ດີ ແລະ ການເປັນຄູ່ຮ່ວມຊະຕາກຳ ລາວ-

ຈີນ ໃຫ້ແຕກດອກອອກຜົນຍິ່ງໆຂຶ້ນ; ພ້ອມທັງ ອວຍພອນໃຫ້ການກະກຽມດຳເນີນກອງປະຊຸມໃຫຍ່ ຄັ້ງທີ XX ຂອງ ພັກກອມມູນິດຈີນ ໃນທ້າຍປີນີ້ ປະສົບຜົນສຳເລັດຢ່າງຈົບງາມ.

## 2. ຫົວໜ້າ ຄຕພ ຕ້ອນຮັບການເຂົ້າຢ້ຽມຂ່ຳນັບ ຂອງ ຄະນະຜູ້ແທນ ສະມາຄົມ ອິນເດຍ ເພື່ອການຮ່ວມມື ວັດທະນະທຳ ແລະ ມິດຕະພາບ



ວັນທີ 04 ກໍລະກົດ 2022, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຮັບການເຂົ້າຢ້ຽມຂ່ຳນັບ ຂອງ ທ່ານ ພິໄຊ ກຸມາຣ ພາທິຮາຣີ (Bijay Kumar Padhihari), ເລຂາທິການສະມາຄົມ ອິນເດຍ ເພື່ອການຮ່ວມມືວັດທະນະທຳ ແລະ ມິດຕະພາບ ພ້ອມດ້ວຍຄະນະ ທີ່ມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ. ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບອັນອົບອຸ່ນ ແລະ ຕີລາຄາສູງຕໍ່ການການມາຢ້ຽມຢາມ ສປປ ລາວ ໃນຄັ້ງນີ້ ຖືເປັນການປະກອບສ່ວນສຳຄັນເຂົ້າໃນການຮັດແໜ້ນ, ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສະມາຄົມມິດຕະພາບ ລາວ-ອິນເດຍ ແລະ ສະມາຄົມ ອິນເດຍ ເພື່ອການຮ່ວມມືວັດທະນະທຳ ແລະ ມິດຕະພາບ ກໍຄື ປະຊາຊົນສອງຊາດ ລາວ ແລະ ອິນເດຍ ໃຫ້ນັບມື້ໄດ້ຮັບການພັດທະນາ ແລະ ກ້າວຂຶ້ນສູ່ລະດັບໃໝ່.

ໃນວັນດຽວກັນ, ສະມາຄົມມິດຕະພາບ ລາວ-ອິນເດຍ ກັບ ສະມາຄົມ ອິນເດຍ ເພື່ອການຮ່ວມມືວັດທະນະທຳ ແລະ ມິດຕະພາບ ໄດ້ພົບປະສອງຝ່າຍ, ຝ່າຍ ລາວ ນຳໂດຍ ທ່ານ ສຸທັມ ສາກົນນິຍົມ, ປະທານສະມາຄົມມິດຕະພາບ ລາວ-ອິນດຍ ແລະ ຝ່າຍອິນເດຍ ນຳໂດຍ ທ່ານ ພິໄຊ ກຸມາຣ ພາທິຮາຣີ, ເລຂາທິການສະມາຄົມ ອິນເດຍ ເພື່ອການຮ່ວມມືວັດທະນະທຳ ແລະ ມິດຕະພາບ, ໂດຍມີ ທ່ານ ດີກ້າ ອັດທານາ (Dinkar Asthana), ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ສ.ອິນເດຍ ປະຈຳ ສປປ ລາວ ແລະ ຄະນະຜູ້ແທນຂອງສອງຝ່າຍເຂົ້າຮ່ວມ; ສອງສະມາຄົມ ໄດ້ປຶກສາຫາລືກ່ຽວກັບກົນໄກຮ່ວມມື, ການແລກປ່ຽນຂໍ້ມູນຂ່າວສານ, ການແລກປ່ຽນການຢ້ຽມຢາມຄະນະຜູ້ແທນເຊິ່ງກັນ ແລະ ກັນ; ໄດ້ລົງນາມບົດບັນທຶກຄວາມເຂົ້າໃຈ (MOU) ໄລຍະ 5 ປີ (2022-2027) ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດການພົວພັນຮ່ວມມືລະຫວ່າງສອງສະມາຄົມໃຫ້ມີບາດກ້າວອັນໃໝ່ໃນຕໍ່ໜ້າ.

### 3. ຄະນະພົວພັນຕ່າງປະເທດສູນກາງພັກ ທາບທາມສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ





ວັນທີ 06 ກໍລະກົດ 2022, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດກອງປະຊຸມທາບທາມ ເພື່ອສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ຂັ້ນຄະນະພົວພັນຕ່າງປະເທດສູນກາງພັກ ຄຸ້ມຄອງ, ໂດຍການເປັນປະທານຂອງ ສະຫາຍທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໂດຍມີຄະນະພັກ, ຄະນະນຳ, ຄະນະກົມ, ຄະນະພະແນກ ແລະ ພະນັກງານວິຊາການທັງໝົດຂອງຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມ; ສະຫາຍ ທອງສະຫວັນ ພົມວິຫານ ໄດ້ເນັ້ນໜັກເຖິງຄວາມໝາຍ, ຄວາມສຳຄັນ ແລະຈຸດປະສົງຂອງວຽກງານສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ເຊິ່ງເປັນວຽກງານໜຶ່ງທີ່ສຳຄັນ, ເປັນພື້ນຖານຂອງວຽກງານພະນັກງານ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງ ໜ້າທີ່ການເມືອງ ໃນສະເພາະໜ້າ ແລະ ຍາວນານ, ເປັນການຫັນຍຸດທະສາດ ວຽກງານພະນັກງານໃຫ້ເປັນອັນລະອຽດ ໃນການສ້າງແຜນກໍ່ສ້າງ-ບຳລຸງ, ຄາດຄະເນສັບຊ້ອນ ແລະຈັດວາງພະນັກງານຢ່າງສົມເຫດສົມຜົນ ເຂົ້າໃນຕຳແໜ່ງນຳພາ-ຄຸ້ມຄອງ ແຕ່ລະຂັ້ນ, ແນໃສ່ຮັບປະກັນລັກສະນະສືບທອດປ່ຽນແທນຕໍ່ເນື່ອງຢ່າງມີປະສິດທິພາບ; ທັງໄດ້ແນະນຳໃຫ້ຜູ້ເຂົ້າຮ່ວມຕ້ອງຄົ້ນຄວ້າເລິກເຊິ່ງ, ເລືອກເຟັ້ນເອົາບຸກຄົນທີ່ພົ້ນເດັ່ນ ມີຄວາມຮູ້, ຄວາມສາມາດ, ຄຸນສົມບັດສິນທຳປະຕິວັດ, ຮູ້ຜັນຂະຫຍາຍແນວທາງຂອງພັກ, ນະໂຍບາຍຂອງລັດ ເຂົ້າໃນການນຳພາປະຕິບັດໜ້າທີ່ວຽກງານ, ມີພາວະຄວາມເປັນຜູ້ນຳ ໃນການນຳພາພະນັກງານ-ລັດຖະກອນເຄື່ອນໄຫວວຽກງານຕ່າງໆ ທີ່ການຈັດຕັ້ງມອບໝາຍໃຫ້, ມີຄວາມສະດຸ້ງໄວຕໍ່ບັນຫາຕ່າງໆ, ແກ້ໄຂບັນຫາຕ່າງໆ ຢ່າງມີປະສິດທິຜົນ, ມີຄວາມດຸໝັ່ນ, ສັດຊື່, ປອດໃສ, ເປັນແບບຢ່າງໃນການດຳລົງຊີວິດ, ບໍ່ສໍ້ລາດບັງຫລວງ ແລະ ເປັນເຈົ້າການໃນການເຕົ້າໂຮມຄວາມສາມັກຄີ, ເຮັດວຽກມີແບບແຜນ, ມີການຊຸກຍູ້ຕິດຕາມ, ກວດກາ, ສະຫຼຸບຕີລາຄາ, ຖອດຖອນບົດຮຽນ ແລະ ໃກ້ຊິດຕິດແທດ ກັບມະຫາຊົນຢ່າງແທ້ຈິງ ເປັນພະນັກງານນຳພາ-ຄຸ້ມຄອງ ແລະ ສືບທອດປ່ຽນແທນໃນຕໍ່ໜ້າ.

### 4. ຄະນະພົວພັນຕ່າງປະເທດສູນກາງພັກ ເຜີຍແຜ່ເອກະສານສຳຄັນ ຂອງພັກ-ລັດ




ວັນທີ 26 ກໍລະກົດ 2022, ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ຈັດກອງປະຊຸມເຜີຍແຜ່ເອກະສານວັນສ້າງຕັ້ງສາຍພົວພັນການທູດ ຄົບຮອບ 60 ປີ, ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລາວ - ຫວຽດນາມ ຄົບຮອບ 45 ປີ ແລະ ວັນເກີດປະທານ ສຸພານຸວົງ ຄົບຮອບ 113 ປີ ໂດຍການເປັນປະທານຂອງສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ມີບັນດາສະຫາຍໃນຄະນະບໍລິຫານງານພັກ, ສະມາຊິກພັກ - ພະນັກງານ ທົ່ວຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມຢ່າງພ້ອມພຽງ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ທວນຄືນມູນເຊື້ອຊີວິດ, ການເຄື່ອນໄຫວ, ຜົນງານ ແລະ ຄຸນງາມຄວາມດີ ຂອງ ປະທານ ສຸພານຸວົງ ໃນທຸກໄລຍະຂອງການປະຕິວັດ ທີ່ໄດ້ສຸມສະຕິປັນຍາ ແລະ ເຫື່ອແຮງເພື່ອນຳພາ ປະຊາຊົນບັນດາເຜົ່າດຳເນີນພາລະກິດປົດປ່ອຍຊາດ ແລະ ສ້າງສາພັດທະນາປະເທດຊາດ; ຍົກໃຫ້ເຫັນຄວາມສຳຄັນຂອງວັນສ້າງຕັ້ງສາຍພົວພັນການທູດ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລາວ-ຫວຽດນາມ ຄົບຮອບ 45 ປີ ຊຶ່ງເປັນເຫດການທີ່ມີຄວາມໝາຍປະຫວັດສາດ ໃນການພົວພັນລາວ-ຫວຽດນາມ, ກ້າວໄປເຖິງການລົງນາມສົນທິສັນຍາມິດຕະພາບ ແລະ ການຮ່ວມມື ໃນວັນທີ 18 ກໍລະກົດ 1977 ເປັນຕົ້ນມາ ເຮັດໃຫ້ສາຍພົວພັນສອງຊາດ ນັບມື້ ນັບໄດ້ຮັບການເສີມຂະຫຍາຍຢ່າງບໍ່ຢຸດຢັ້ງ.

## IV. ການເຄື່ອນໄຫວວຽກງານ ຂອງອົງການຈັດຕັ້ງມະຫາຊົນ ຄຕພ

### 1. ສະຫະພັນແມ່ຍິງ ຄຕພ ຢ້ຽມຊົມຫໍມູນເຊື້ອແມ່ຍິງລາວ

ວັນທີ 15 ກໍລະກົດ 2022, ສະຫາຍ ນາງ ສີຣິພອນ ຄູຫາເທບ, ປະທານສະຫະພັນແມ່ຍິງ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ນຳພາສະມາຊິກແມ່ຍິງ ພ້ອມດ້ວຍຜູ້ຕາງໜ້າຈາກສະຫະພັນກຳມະບານ ແລະ ຊາວໜຸ່ມ ຄຕພ ຈຳນວນໜຶ່ງ ໄປຢ້ຽມຊົມຫໍມູນເຊື້ອແມ່ຍິງລາວ ທີ່ບ້ານໂພນທັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ເພື່ອຂໍານັບຮັບຕ້ອນວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 67 ປີ (20/07/1955-20/07/2022), ໂດຍ ຜູ້ບັນຍາຍ ຈາກສູນກາງສະຫະພັນແມ່ຍິງລາວ ໄດ້ຊີ້ໃຫ້ເຫັນວ່າ ສະມາຊິກແມ່ຍິງລາວ ໄດ້ເປັນໜ່ວຍລຳລຽງໃຫ້ແກ່ກຳລັງປະຕິວັດລາວ, ຮ່ວມກັບອ້າຍນ້ອງຊາຍ ຕໍ່ສູ້ເພື່ອປົດປ່ອຍປະເທດຊາດ; ຍົກໃຫ້ເຫັນຜົນງານຫັດຖະກຳຕໍ່າແຜ່ນອັນປານີດຂອງແມ່ຍິງ

ລາວ ແຕ່ອະດີດ ຈົນຮອດປັດຈຸບັນ; ປະກອບສ່ວນເຂົ້າໃນຕຳແໜ່ງບໍລິຫານໃນຂັ້ນຕ່າງໆຂອງ ພັກ-ລັດ, ເປັນສະມາຊິກສະພາແຫ່ງຊາດ ກວມເປີເຊັນສູງຂຶ້ນ ໃນແຕ່ລະສະໄໝ.



2. **ສະຫະພັນແມ່ຍິງ ຄຕພ ເຂົ້າຮ່ວມກິລາສາມັກຄີ**




ວັນທີ 22 ກໍລະກົດ 2022 ທີ່ເດີ່ນກິລາ ນິວອາລີນ່າ, ສະຫະພັນແມ່ຍິງ ແລະ ຊາວໜຸ່ມ ຄຕພ ຍັງໄດ້ເຂົ້າຮ່ວມແຂ່ງຂັນກິລາບານເຕະຍິງ-ຊາຍ, ດຶງເຊືອກ ແລະ ແລ່ນໄຕ່ ກັບບັນດາອົງການຈັດຕັ້ງອື່ນໆ ໂດຍການເປັນເຈົ້າພາບຂອງສູນກາງສະຫະພັນແມ່ຍິງລາວ ເພື່ອສະເຫຼີມສະຫຼອງວັນແມ່ຍິງລາວດັ່ງກ່າວ, ໃນນັ້ນ ສະຫະພັນແມ່ຍິງ ແລະ ຊາວໜຸ່ມ ຄຕພ ໄດ້ລາງວັນຊະນະເລີດ ປະເພດ ເຕະບານຊາຍ ແລະ ກິລາແລ່ນໄຕ່ ທີມປະສົມ ຍິງ-ຊາຍ, ລາງວັນຊົມເຊີຍ ບານເຕະຍິງຍິງ ແລະ ດຶງເຊືອກ.